# ທ່ານມີສິດ

ໃນການດູແລສຸຂະພາບຖ້າຫາກທ່ານເຂົ້າຮ່ວມໃນໂຄງການ ເມດີແຄວແລະເດນຕິດແຄວ:

1 **ໄດ້ຮັບການປະຕິດ້ວຍຄວາມເຄົາລົບແລະຢ່າງມີສັກສີ**

2 **ບໍລິການຮັກສາປົວແຂ້ວ**
ໂດຍການເຂົ້າຮ່ວມໃນໂຄງການຕາມທີ່ທ່ານເລືອກ.

3 **ຂໍຮ້ອງເອົານາຍພາສາ**
ໂດຍທີ່ບໍ່ຕ້ອງຈ່າຍເງິນ.

4 **ໃຊ້ນາຍພາສາທີ່ມີຄຸນນະພາບກົ່ວໝູ່ເພື່ອນຫລືຊະມາສິກໃນຄອບຄົວຂອງທ່ານ**

5 **ບອກກ່າວຖ້າທ່ານມີຄວາມຕ້ອງການດ້ານຮັກສາແຂ້ວແລະພາສາຂອງທ່ານບໍ່ໄດ້ຮັບການຕອບສະນອງ**
ທ່ານສາມາດໂທຫາຫ້ອງການປະກັນພັຍແຂ້ວທີ່ເບີ 1-800-323-6384ຫລືໂທໄປຫາທາງຫ້ອງການຜູ້ກວດກາປະກັນພັຍຂ້ວທີ່1-888-452-8609 ເພື່ອລາຍງານບັນຫາຂອງທ່ານ

6 **ໄດ້ຮັບການນັດຫມາຍພາຍໃນເວລາທີ່ເຫມາະສົມ**
ເວລາທີໂທລະສັບນັດກັບຫ້ອງການດູແລສຸຂະພາບເມືອເວລາທ່ານຈະເຮັດການນັດພົບ:

- ການນັດໝາຍການດູແລດ່ວນຄວນຖືກນຳສະເນີພາຍໃນ3ວັນ.
- ການນັດໝາຍບໍ່ຈຳເປັນຕອ້ງໄດ້ຮັບການ ສະນອງໃນ 36 ວັນເວລາລາດຊະການ
- ການທຳຄວາມສະອາດ ແຂ້ວ ຕອ້ງໄດ້ຮັບການສະນອງໃນ40ວັນເວລາລາດຊະການ

7 **ຕັດສິນໃຈເຂົ້າຮ່ວມໃນການກ່ຽວຂອ້ງທີ່ທ່ານຕ້ອງການ**

8 **ມີການບັນທຶກຂໍ້ມູນສ່ວນຕົວຂອງທ່ານໄວ້ເປັນຄວາມລັບ**

# ການບໍລິການແຂ້ວຂອງທ່ານໂດຍຜ່ານທາງເມດີແຄວ Medi-Cal

ທ່ານຮູ້ບໍ:

- ສຸຂະພາບແຂ້ວຂອງທ່ານ ແມ່ນເຊື່ອມຕໍ່ກັບການປ້ອງກັນສຸຂະພາບ ໂດຍທົ່ວໄປຂອງທ່ານ
- ການປ້ອງກັນສຸຂະພາບໂດຍທົ່ວໄປຂອງທ່ານ ດີກວ່າ
- ຮັກສາໄວ້ແຕ່ຫົວທີສາມາດຈະເຮັດໃຫ້ຄວາມເຈັບນ້ອຍລົງ, ລົດຄ່າໃຊ້ຈ່າຍ, ແລະລົດພັຍຕໍ່ສຸຂະພາບນຳອີກ

ໃບປະກາດນີ້:
ໃຫ້ສະພາບລວມຂອງສິ່ງທີ່ທ່ານຕ້ອງການຮູ້ ກ່ຽວກັບການບໍລິການແຂ້ວທີ່ມີແກ່ຜູ້ໃຫ່ຍ ໂດຍຜ່ານບັດເມດີແຄວMedi-Cal.

**ຕິດຕໍ່ພວກເຮົາ!**

The Health Consumer Alliance offers free assistance over-the-phone or in-person to help people get the health care services they need.

**Call 1-888-804-3536**

ຄວບຄຸມໂດຍ:

ASIAN AMERICANS ADVANCING JUSTICE LOS ANGELES · JUSTICE IN AGING FIGHTING SENIOR POVERTY THROUGH LAW · CPEHN California Pan-Ethnic Health Network *Advancing health justice and equity for 25 years*

9/2019

# ໃຊ້ບັດຮັກສາແຂ້ວ




ຖ້າທ່ານມີMedi-Cal ເຕັມຂອບ,
ທ່ານຍັງມີການຄຸ້ມຄອງແຂ້ວທີ່ເອີ້ນວ່າ
Denti-Cal

1 **ຕ້ອງນັດພົບ**

ທ່ານສາມາດຊອກຫາລາຍຊື່ຜູ້ໃຫ້ບໍລິການເດັນຕິແຄວ Denti-Cal ໂດຍເຂົ້າໄປໃນເວັບໃຊ້ນີ້ (http://bit.ly/Medi-CalDentist)ຫລືວ່າໂທໄປ 1-800-322-6384.

2 **ຖາມໂຮງໝໍແຂ້ວວ່າຮັບບັດປົວແຂ້ວຂອງເດັນຕິແຄວບໍ່. ບັດເດັນຕິແຄວDenti-Cal**

ຈະຈ່າຍຄ່າຮັກສາແຂ້ວຕາມລາຍການບໍລິການທີ່ຄຸ້ມຄອງຈາກບັດປົວແຂ້ວຂອງທ່ານ.

3 **ທ່ານສາມາດຮ້ອງຂໍນາຍພາສາ**

ທ່ານສາມາດຮ້ອງຂໍນາຍພາສາທີ່ມີຄຸນນະພາບໄດ້ຖ້າຫາກວ່າທ່ານເວົ້າພາສາອັງກິດບໍ່ໄດ້ ໂທໄປ 1-800-322-5384

ໂຮງໝໍແຂ້ວຕ້ອງມີນາຍພາສາໃຫ້ກັບທ່ານເມື່ອເວລາທ່ານໄປຫາໝໍແຂ້ວໂດຍທີ່ທ່ານບໍ່ຕ້ອງຈ່າຍເງິນເພື່ອນາຍພາສາເລີຍ.

4 **ມື້ທີ່ທ່ານມີນັດ**

ທ່ານຕອ້ງເອົາ

- ທ່ານຕອ້ງເອົາບັດປະກັນພັຍແຂ້ວຂອງທ່ານໄປນຳ
- ເອົາບັດປະຈຳຕົວຫລືໃບຂັບຂີ່ລົດຂອງທ່ານໄປນຳ
- ເອົາບັດທີ່ທ່ານເຂົ້າລ່ວມໃນກຸ່ມຂອງການຮັກສາແຂ້ວໄປນຳ

ທ່ານບໍ່ຈຳເປັນຕ້ອງບອກສະຖານະພາບການເຂົ້າເມືອງຂອງທ່ານເອງຫຼືຄອບຄົວຂອງທ່ານໃນການນັດຫມາຍຂອງທ່ານ

5 **ການຈ່າຍຄ່າຮັກສາ**

ໂຮງໝໍແຂ້ວຈະບອກທ່ານກ່ຽວກັບການໃຊ້ຈ່າຍແລະບັດປະກັນພັຍກ່ຽວກັບແຂ້ວບໍ່ຈ່າຍຫຍັງແດ່. ທ່ານຫມໍDenti-Cal ຂອງທ່ານບໍ່ສາມາດຄິດຄ່າບໍລິການທີ່ທ່ານໄດ້ຮັບການບໍລິກາDenti-Cal.

6 **ຕ້ອງລະມັດລະວັງໃນການຈ່າຍຄ່າຮັກສາ**

ບາງໂຮງໝໍແຂ້ວອາດຈະແນະນຳໃຫ້ທ່ານສມັກໃຊ້ແຜນການຊຳລະເງິນຫລືໃຊ້ບັດຄະເຣດິດເພື່ອຈ່າຍຄ່າບໍລິການທີ່ບໍ່ໄດ້ຮັບຄວາມຄຸ້ມຄອງຈາກບັດປະກັນພັຍແຂ້ວ.ທ່ານບໍ່ຕ້ອງຟ້າວລົງມືເຊັນຊື່. ທ່ານຄວນຈະມີລາຍລະອຽດໃນພາສາຂອງທ່ານເພື່ອອະທິບາຍໃຫ້ທ່ານເຂົ້າໃຈໃຫ້ດີກ່ອນລົງມືເຊັນຊື່ຂອງທ່ານ.

7 **ຖາມທ່ານໝໍແຂ້ວຂອງທ່ານ**

ເປັນສິ່ງສຳຄັນທີ່ທ່ານຕ້ອງເຂົ້າໃຈເຖິງສະພາບສຸກະພາບແລະການຮັກສາແຂ້ວຂອງທ່ານ.
ຖາມທ່ານໝໍແຂ້ວຂອງທ່ານກ່ຽວກັບ3ຄຳຖາມງ່າຍໆ

1. ສິ່ງທີ່ເປັນບັນຫາຫລັກຂອງແຂ້ວຂອງທ່ານ?
2. ທ່ານຕອ້ງເຮັດແນວໃດ?
3. ເປັນຫຍັງການຮັກສາແຂ້ວຈຶ່ງສຳຄັນຕໍ່ທ່ານ?

# ຜົນປະໂຍດທີ່ທ່ານຈະໄດ້ຮັບຈາກທາງໂຮງໝໍແຂ້ວມີຫຍັງແດ່



ເລີ້ມຕັ້ງແຕ່ເດືອນມົກກະຣາວັນທີ1,ປີ2018, ຜູ້ໃຫ່ຍທີ່ມີບັດປະກັນພັຍແຂ້ວເຕັມຮູບແບບບໍລິການຂອງເມດິແຄວຈະມີຄ່າບໍລິການຫລາຍຂື້ນກວ່າເດີມ.

*ສຸພາບສັດຕີທີ່ຕັ້ງຄັນທຸກໆຄົນທີ່ໄດ້ຮັບເມດິແຄວບັດບໍລິການຂອງການຮັກສາແຂ້ວເຕັມຂອບເຂດ(ຫລືຜູ້ທີ່ກ່ຽວຂ້ອງກັບການຕັ້ງຄັນ)ໄດ້ຮັບຜົນປະໂຍດທາງການຮັກສາປິ່ນປົວແຂ້ວເຕັມຣາຍການຂອງຄ່າຮັກສາ.

1 **ຫລັກການໃຫຍ່ໃນການບໍລິການ**

- ການກວດກາແຂ້ວເບື້ ອງຕົ້ ນ
- ທໍ າຄວາມສະອາດປ້ອງກັ ນໂຣກ
- ທໍ າຄວາມສະອາດໂດຍຟລູ ໍອໄຣ
- ການເອັ ກສະເຣ
- ການຈອດແຂ້ວທີ່ ເປັ ນຮູ
- ການໃສ່ແຂ້ວປອມເປັ ນເຫລັ້ ມ(ດ້ວຍແຂ້ວທີ ເຮັ ດດ້ວຍເຫຼັ ກເທົ່ ານັ້ ນ)
- ຮັ ກສາສເພາະສານສະກັ ດພິ ເສດ
- ຮັ ກສາຮາກແຂ້ວເຫຼົ້ ມທາງໜ້ າ
- ໃສ່ແຂ້ວປອມ
- ດັ ດແປງແຂ້ວປອມ
- **ໃໝ່ ! ເ ັຮດແຂ້ວໃໝ່ ໂດຍໃຊ້ຫ້ ອງປະຕິ ັບດການທິ ດລອງທັ ນສມັ ຍ**
- **ໃໝ່ ! ແລະການຮັ ກສາຮາກແຂ້ວ**
- **ໃໝ່ ! ການບັ ບປຸງເຮັ ດແຂ້ວປອມບາງສ່ວນ**
- **ໃໝ່! ການແປງແຂ້ວແລະເຮັດໃຫ້ແຂ້ວສເມີກັນຕາມທັນແບບວິດທະຍາສາດ**
- **ໃໝ່ ! ແລະການຮັ ກສາຮາກແຂ້ວ**

ຮຽນຮູ້ກ່ຽວກັບສິດທິຂອງການຮັກສາໂດຍໃຊ້ອິນເທີແນດ https://www.denti-cal.ca.gov ຫລືວ່າໂທລະສັບຫາ 1-800-322-6384.

2 **ມູນຄ່າຂອງການໃຊ້ຈ່າຍໃນການຮັກສາ**

ບັດປະກັນພັຍຮັກສາແຂ້ວຂອງທ່ານມີມູນຄ່າເຖິງ1,800ດອນລາໃນນຶ່ງປີ. ທາງໂຮງໝໍແຂ້ວຕ້ອງກວດເບິ່ງລາຍລະອຽດຂອງການຮັກສາແຂ້ວຂອງທ່ານກ່ອນເຖິງວ່າເງິນ1,800ດອນລາພຽງພໍກັບການຮັກສາແຂ້ວຂອງທ່ານຫລືບໍ່. ເພາະບາງທີການຮັກສາແຂ້ວຕ້ອງໃຊ້ເງິນຫລາຍກໍ່ວ 1,800ດອນລາ
ການຮັກສາແຂ້ວບາງຢ່າງບໍ່ຕ້ອງໃຊ້ຣາຄາ1,800ດອນລາເຊັ່ນເຮັດແຂ້ວໂກບແຂ້ວປອມໝົດທາງປາກ, ການຮັກສາສຸກເສີນ, ຜູ້ຍິງຕັ້ງຄັນ,ແລະກາຮັກສາແຂ້ວໃນລະຍະຍາວ.

3 **ທ່ານສາມາດໃຊ້ສິດທິໃນການຂໍຮ້ອງຂອງສານ**

ທ່ານຈະໄດ້ຮັບໜັງສືຖ້າຫາກທ່ານຖືກປະຕິເສດໃນການໃຊ້ບັດປະກັນພັຍແຂ້ວທ່ານສາມາດຮ້ອງຂໍໃນການຮັກສາໄດ້ອີກ.

4 **ຖ້າຫາກທານມີບັດຮັກສາແຂ້ວທີ່ຈຳກັດຂອບເຂດ**

ຖ້າຫາກທ່ານມີບັດປະກັນພັຍທີ່ຈກັດຂອບເຂດຫລືເອີ້ນວ່າບັດປະກັນພັຍສຸກເສີນຜົນປະໂຍດທາງການຮັກສາຄຸ້ມຄອງພາວະສຸກເສີນເທົ່ານັ້ນເຊັ່ນການປວດແຂ້ວຢ່າງຮຸນແຮງແຕກຫັກແລະບໍ່ສາມາດຄວບຄຸມເລືອດທີ່ອອກຈາກປາກແລະມີອາການອື່ນໆ